# ຊົມເຊີຍຜົນສຳເລັດ

## ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ທຄຕລ ປະຈຳໄຕມາດ 02/2023 ແລະ ທິດທາງແຜນການ ປະຈຳໄຕມາດ 03/2023




ໃນວັນທີ 13 ກໍລະກົດ 2023 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈຳໄຕມາດ **02/2023** ແລະ ກຳນົດທິດທາງແຜນການ ປະຈຳໄຕມາດ **03/2023** ທີ່ ໂຮງແຮມຫຼວງພະບາງວິວ, ນະຄອນຫຼວງພະບາງ, ພາຍໃຕ້ການເປັນປະທານຂອງ ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ, ໂດຍມີບັນດາທ່ານຄະນະອຳນວຍການ, ຄະນະພະແນກ, ສູນ ແລະ ສາຂາ ທົ່ວລະບົບ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມດັ່ງກ່າວໄດ້ລາຍງານການປະຕິບັດວຽກງານທີ່ພົ້ນເດັ່ນ ແລະ ຜົນການດຳເນີນທຸລະກິດຂອງ ທຄຕລ ໃນໄຕມາດ **02/2023** ພ້ອມທັງຍົກໃຫ້ເຫັນສະພາບການເຄື່ອນໄຫວຮອບດ້ານ, ຜົນງານທີ່ ທຄຕລ ຍາດມາໄດ້ ແລະ ຂໍ້ຄົງຄ້າງ ໃນໄລຍະຜ່ານມາ, ເຊິ່ງຜົນການດຳເນີນງານ ໃນໄຕມາດ 02/2023 ໂດຍລວມແມ່ນເຫັນວ່າປະຕິບັດໄດ້ດີພໍສົມຄວນໃນຫຼາຍໆດ້ານ.

ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການນຳສະເໜີພາບລວມການເຄື່ອນໄຫວບາງວຽກງານຈຸດສຸມຂອງ ທຄຕລ ເປັນຕົ້ນແມ່ນວຽກງານ KPI, ວຽກງານການຄຸ້ມຄອງ ແລະ ຂະຫຍາຍສິນເຊື່ອ, ວຽກງານແກ້ໄຂໜີ້, ພາບລວມການເຄື່ອນໄຫວວຽກງານການຕະຫຼາດ ຂອງ ທຄຕລ ໃນໄລຍະຜ່ານມາ ແລະ ທິດທາງແຜນຍຸດທະສາດການຕະຫຼາດແບບບຸກທະລຸໃນສະພາບການແຂ່ງຂັນສູງ ເພື່ອສືບຕໍ່ພັດທະນາຜະລິດຕະພັນຕ່າງໆ ໃຫ້ມີຄວາມທັນສະໄໝ ແລະ ສາມາດຕອບໂຈດຄວາມຕ້ອງການຂອງທຸກກຸ່ມລູກຄ້າ.




**ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມກໍ່ໄດ້ພ້ອມກັນປະກອບຄຳຄິດເຫັນຢ່າງຫຼາກຫຼາຍ ແລະ ສ້າງສັນ ຕໍ່ແຕ່ລະເນື້ອໃນທີ່ຍົກຂຶ້ນໃນກອງປະຊຸມ ເພື່ອຊຸກຍູ້ສົ່ງເສີມ ແລະ ເພື່ອປັບປຸງແກ້ໄຂຈຸດອ່ອນ - ຂໍ້ຄົງຄ້າງ, ຖອດຖອນເອົາບົດຮຽນທີ່ດີ ແລະ ຈຸດອ່ອນທີ່ຄວນປັບປຸງ.**

*ໃນຕອນທ້າຍກອງປະຊຸມ ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ໄດ້ໃຫ້ກຽດ ໂອ້ລົມພ້ອມທັງ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ໃນໄລຍະ ໄຕມາດ 02/2023 ເຊິ່ງລ້ວນແລ້ວແຕ່ເປັນໝາກຜົນຮ່ວມກັນຂອງ ພະນັກງານ ທຄຕລ ທັງໝົດທຸກພາກສ່ວນທີ່ຍາດແຍ່ງມາໄດ້ ແລະ ຍັງໄດ້ໃຫ້ທິດຊີ້ນຳ ໂດຍເນັ້ນໜັກບາງວຽກງານ ໃນຕໍ່ໜ້າ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ບັນລຸຕາມເປົ້າໝາຍ ແລະ ແຜນການທີ່ວາງໄວ້ຕາມແນວທາງນະໂຍບາຍຂອງພັກລັດ ແລະ ຍັງເນັ້ນໃສ່ໃຫ້ທຸກພາກສ່ວນຮ່ວມແຮງກັນພັດທະນາ ທຄຕລ ໃຫ້ເປັນທະນາຄານ ທີ່ມີຄວາມເຂັ້ມແຂງ ທັນສະໄໝ ແລະ ໄດ້ມາດຕະຖານສາກົນ.*



*ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ*
*ທັນສະໄໝ ວ່ອງໄວ ໝັ້ນໃຈ*

***ຂໍ້ມູນ:*** *ອີງຕາມວາລະຂອງກອງປະຊຸມ - ບົດສະຫຼຸບການເຄື່ອນໄຫວວຽກງານ ທຄຕລ ປະຈຳໄຕມາດ* ***02/2023*** *ແລະ ທິດທາງແຜນການ ໄຕມາດ* ***03/2023***

*ຂຽນຂ່າວໂດຍ: ນາງ ສຸກພາວັນ ສີວົງໄຊ*
ຂະແໜງການຕະຫຼາດ, ພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່